NSW GOVERNMENT | Education Public Schools

# ພາລູກອ່ານໜັງສືຢູ່ບ້ານ ຂໍ້ແນະນໍາສໍາລັບພໍ່ແມ່ທີ່ມີລູກອາຍຸນ້ອຍ

READING WITH YOUR CHILD AT HOME – IDEAS FOR PARENTS OF YOUNG CHILDREN

## ການອ່ານໜັງສືເປັນສິ່ງສໍາຄັນ

READING IS IMPORTANT

- ການອ່ານຖືວ່າເປັນຄວາມສາມາດທີ່ສໍາຄັນຢ່າງໜຶ່ງ. ຢູ່ໂລກປັດຈຸບັນທີ່ມີຄວາມຈະເຣີນ ການອ່ານກໍ່ຍິ່ງສໍາຄັນກວ່າ ສມັຍໃດໆມາ.
- ເດັກນ້ອຍຈະຮຽນຮູ້ເຖິງຄວາມສໍາຄັນຂອງການດ່ານເມື່ອເຂົາເຈົ້າເຫັນສະມາຊິກໃນ ຄອບຄົວໃຊ້ການອ່ານແລະການຂຽນເປັນກິຈວັດປະຈໍາວັນ.
- ການພາລູກອ່ານໜັງສືຢູ່ບ້ານຈະຊ່ວຍໃນເຣື່ອງການຮຽນຂອງເຂົາເຈົ້າທຸກຂແນງຢູ່ໂຮງຮຍນ.
- ເດັກນ້ອຍຈະເຫັນທ່ານອ່ານແລະຂຽນໃນຊີວິດປະຈໍາວັນ - ອ່ານເພື່ອຄວາມມ່ວນຊື່ນ, ເຊົ່າເຣື່ອງນິທານກັບລູກ, ໃຊ້ຕໍາຣາເຮັດອາຫານ, ຂຽນລາຍການຊ້ອບປິ້ງ, ຂຽນບັດອວຍພອນວັນເກີດ ຫລືອ່ານປ້າຍຖນົນ. ວິທີການດັ່ງກ່າວນີ້ຈະເຮັດໃຫ້ລູກໄດ້ຮູ້ວ່າການອ່ານ ແລະຂຽນເປັນຄວາມສາມາດອັນສໍາຄັນໃນໂລກປັດຈຸບັນ.
- ທາງໂຮງຮຽນມັກຈະຂໍໃຫ້ພໍ່ແມ່ຟັງລູກອ່ານໜັງສືຢູ່ບ້ານເລື້ອຍໆ. ອັນນີ້ ແມ່ນວິທີການສົ່ງເສີມການອ່ານຂອງລູກທີ່ດີວິທີນຶ່ງ. ປື້ມອ່ານຕ່າງໆນັ້ນທ່ານສາມາດໄປຂໍຢືມ ເອົາໄດ້ຈາກຫ້ອງສມຸດໃນເຂດບ້ານຂອງທ່ານ.
- ໃຫ້ມີຄວາມໝັ້ນໃຈວ່າລູກຂອງທ່ານຈະສາມາດຮຽນອ່ານໄດ້.

## ທ່ານຈະຊ່ວຍລູກໄດ້ຢ່າງໃດແດ່ຢູ່ບ້ານ

WHAT YOU CAN DO AT HOME TO HELP

- ໃຫ້ເປັນຕົວຂອງຕົວເອງກ ຈົ່ງອະນຸຍາດໃຫ້ເດັກມີສ່ວນກ່ຽວໃນການສົນທະນາໃນແຕ່ລະມື້.
- ໃຫ້ອ່ານອອກສຽງດັງໆໃຫ້ລູກຟັງ. ມັນຈະ ວຍໃຫ້ລກໄດ້ເຂົ້າໃຈພາສາຂອງປື້ມແ ລະຈະສົ່ງເສີມໃຫ້ເຂົາເຈົ້າມັກປື້ມແລະມັກອ່ານ.
- ໃຫ້ເວົ້າເຖິງປື້ມ, ອ່ານປື້ມນໍາກັນ ແລະ ເຮັດໃຫ້ການອ່ານເປັນກິຈກັມທີ່ມ່ວນຊື່ນຮ່ວມກັນ.

- ໃຫ້ໝັ້ນໃຈວ່າໃຫ້ມີໜັງສືຫລາຍໆຊນິດໄວ້ໃຫ້ລູກອ່ານຢູ່ບ້ານ, ຮວມທັງປຶ້ມເຣື່ອງຈິງແລະເຣື່ອງແຕ່ງ.
- ຖ້າວ່າພາສາເຄົ້າຂອງທ່ານບໍ່ແມ່ນພາສາອັງກິດ ການອ່ານປຶ້ມເປັນພາສາຂອງທ່ານໃຫ້ລູກຟັງເປັນສິ່ງສຳຄັນ. ຈາກປະສົບການ ທີ່ຜ່ານມາສະແດງໃຫ້ເຫັນວ່າການໃຊ້ພາສາເຄົ້າຈະຊ່ວຍໃຫ້ລູກຮຽນອ່ານພາສາອັງກິດໄດ້ດີ.
- ພຍາຍາມຢ່າໃຫ້ໂທຣະສັບມາແຊກແຊງການອ່ານຂອງລູກ. ໃຫ້ຈັດເວລາພິເສດສຳລັບການອ່ານໜັງສືກັບລູກ, ໂດຍໃຫ້ໄກຈາກ ໂທຣະທັດ.
- ໃຫ້ຟັງລູກທຸກໆມື້, ເຖິງວ່າຈະເປັນເວລາສັ້ນໆກໍຕາມ.
- ໃຫ້ເອົາປຶ້ມໃຫ້ເປັນຂອງຍ້ອມໃຈ ຫລື ເປັນຣາງວັນ.

## ຂໍ້ແນະນຳໃນການຟັງລູກອ່ານ

### HINTS FOR LISTENING TO YOUR CHILD READ

- ກ່ອນອ່ານໜັງສື, ໃຫ້ເວົ້າກ່ຽວກັບໜ້າປົກປຶ້ມ, ຫົວຂໍ້, ຮູບປະກອບ, ແລະ ລົມກັນວ່າປຶ້ມນັ້ນຈະຂຽນເຖິງເຣື່ອງຫຍັງ.
- ໃນລະຫວ່າງອ່ານ ໃຫ້ເວົ້າ ແລະ ຖາມຄຳຖາມກ່ຽວກັບເນື້ອເຣື່ອງ ແລະ ຮູບປະກອບ.
- ຫລັງຈາກອ່ານຈົບແລ້ວ, ໃຫ້ເວົ້າແລະຖາມຄຳຖາມກ່ຽວກັບເນື້ອເຣື່ອງແລະຮູບປະກອບ.
- ເມື່ອອ່ານປຶ້ມຍາກໆນຳກັນ, ໃຫ້ປ່ຽນກັນອ່ານ. ໃຫ້ຜູ້ທີ່ຮຽນອ່ານໃໝ່ອ່ານສ່ວນທີ່ເວົ້າຊ້ຳກັນ ແລະ ໃຫ້ຜູ້ທີ່ອ່ານຊຳນານແລ້ວ ອ່ານໝົດວັກ ຫລື ໝົດໜ້ານຶ່ງ.
- ເມື່ອອ່ານຖືກຄຳສັບທີ່ບໍ່ຮູ້:

  **ໃຫ້ຢຸດ** ເພື່ອໃຫ້ລູກມີເວລາຄິດຫາຄວາມໝາຍຂອງຄຳສັບນັ້ນ

**ໃຫ້ບອກໃບ້**

- ໃຫ້ກັບຄືນໄປເລີ້ມດ່ານຈາກຈຸດເລີ້ມຕົ້ນຂອງປໂຍກ, ຫລືອ່ານຜ່ານຄຳສັບທີ່ຍາກໄປກ່ອນຈົນຮອດທ້າຍຂອງປໂຍກ.
- ໃຫ້ຊອກຫາເງື່ອນງຳຈາກຮູບ ຫລື ຈາກຄຳສັບອື່ນໆ.
- ໃຫ້ເບິ່ງອັກສອນໂຕທຳອິດແລະຄິດຫາຄຳສັບທີ່ເລີ້ມຈາກໂຕອັນສອນນັ້ນ.
- ໃຫ້ຖາມວ່າ: "ເວົ້າແບບນີ້ມີຄວາມໝາຍບໍ?"
- ອ່ານຄຳເວົ້າໂດຍພຍາຍາມອອກສຽງ
- ຖ້າຈຳເປັນກໍໃຫ້ບອກຄຳສັບນັ້ນໃຫ້ລູກ.

**ໃຫ້ຍ້ອງລູກ** ເຖິງແມ່ນວ່າເຂົາເຈົ້າຈະອ່ານຜິດແດ່ກໍຕາມ.

# ຄວນອ່ານຫຍັງ ແລະ ຄວນເຮັດຫຍັງແດ່

## WHAT TO READ AND DO

- ໃຫ້ເລົ່າແລະເລົ່າຄືນເຖິງເຣື່ອງຣາວທຸກຊນິດ ເຊັ່ນນິທານໂປຣດ, ເຣື່ອງເທພນິຍາຍ, ເຄົ້າໂຄງເຣື່ອງພາພຍົນ, ຂ່າວທ້ອງຖິ່ນ ແລະ ປວັດຄອບຄົວ.
- ໃຫ້ປລິ້ນເກມເຊັ່ນ "ຂ້ອຍເປັນນັກສືບ... ຂອງສິ່ງນຶ່ງທີ່ເລີ້ມຕົ້ນດ້ວຍອັກສອນໂຕ d".
- ໃຫ້ລູກອ່ານຕຳຣາເຮັດອາຫານທີ່ງ່າຍໆຍາມເຮັດອາຫານນຳກັນ.
- ໃຫ້ອ່ານປຶ້ມຕລົກ, ນິຕຍະສານ, ນິທານເຣື່ອງສັ້ນ, ບົດກະວີ ແລະ ຄຳກອນ, ຣວມທັງຄຳກອນເພງສຳລັບເດັກ.
- ໃຫ້ອ່ານຫນັງສືພິມນຳກັນ.
- ໃຫ້ເຮັດອັກສອນໄຂວ່ (crosswords) ແລະ ອັກສອນໄຂວ່ປິສນາ ກຸໄນພກ (puzzles) ນຳກັນ.
- ໃຫ້ອ່ານປຶ້ມລາຍການ TV ນຳກັນກ່ອນເປີດເບິ່ງລາຍການ.
- ໃຫ້ເບິ່ງໃບປິວໂຄສະນາທີ່ເຂົ້າມາປ່ອນຕູ້ຈົດຫມາຍນຳກັນ.
- ໃຫ້ອ່ານປ້າຍບອກທາງແລະເຄື່ອງຫມາຍເມື່ອຂັບຣົດແລະໄປຊ້ອບປິ້ງ.
- ໃຫ້ອ່ານແລະຂຽນໂນຕແລະຈົດຫມາຍເຖິງສະມາຊິກຄອບຄົວ.
- ໃຫ້ຫລິ້ນເກມເທິງກະດານນຳກັນແລະໃຫ້ອ່ານກະຕິກາ.
- ໃຫ້ຫາຕົວອັກສອນຢາງ, ສີທຽນ, ສໍດຳ, ປາກກາ ແລະ ເຈັ້ຍຂຽນໄວ້ໃຫ້ລູກ.

# ແລະໂປດຈຳໄວ້ວ່າ

## AND DO REMEMBER . . .

- ໃຫ້ລົມກັນເຖິງຄວາມຫມາຍຂອງເຣື່ອງແລະຄຳສັບ.
- ໃຫ້ສົ່ງເສີມໃຫ້ລູກຂອງທ່ານອ່ານຢູ່ທຸກໆແຫ່ງແລະທຸກໆເວລາ.
- ຈົ່ງເຮັດໃຫ້ລູກເຫັນວ່າທ່ານມີຄວາມມ່ວນຊື່ນໃນການອ່ານ.
- ໃຫ້ໄປໃຊ້ຫ້ອງສມຸດໃກ້ບ້ານທ່ານ. ໃຫ້ຢືມປຶ້ມສຳລັບຕົວທ່ານເອງແລະສຳລັບລູກດ້ວຍ.
- ໃຫ້ໄປລົມກັບນາຍຄຣູປະຈຳຫ້ອງຂອງລູກທ່ານ ຫລື ລົມກັບຄຣູໃຫຍ່ຖ້າຕ້ອງການຄວາມຊ່ວຍເຫລືອຫລືຄຳແນະນຳເພີ້ມເຕີມ.
- ໃຫ້ມີຄວາມມ່ວນຊື່ນເມື່ອອ່ານຫນັງສື - ການອ່ານຄວນແມ່ນສິ່ງສນຸກສນານ.

**ກະຣຸນາຕິດຕໍ່ຫາໂຮງຮຽນລູກທ່ານ ແລະ ໄປຂໍເອົາຣາຍລະອຽດເພື່ອຊ່ວຍໃຫ້ລູກມີຄວາມສາມາດດ້ານການອ່ານ.**